ADA Australia
*Your aged and disability advocates*

# ບໍລິການດູແລຜູ້ສູງອາຍຸຂອງທ່ານ

## ບໍ່ເສຍຄ່າແລະເກັບເປັນຄວາມລັບ ເລື່ອງຂອງທ່ານ, ສຽງຂອງທ່ານ

(Lao/ລາວ)







- ທ່ານເປັນຜູ້ສູງອາຍຸແລະຕ້ອງການຄວາມຊ່ວຍເຫຼືອຢູ່ບ້ານບໍ?
- ທ່ານຮູ້ກ່ຽວກັບບໍລິການຕ່າງໆທີ່ໃຫ້ການດູແລຜູ້ສູງອາຍຸທີ່ມີຢູ່ເພື່ອຊ່ວຍຜູ້ສູງອາຍຸບໍ?
- ທ່ານຕ້ອງການຄວາມຊ່ວຍເຫຼືອເພື່ອເຂົ້າໄປໃຊ້ບໍລິການດູແລຜູ້ສູງອາຍຸບໍ?
- ທ່ານມີບັນຫາກັບບໍລິການດູແລຜູ້ສູງອາຍຸທີ່ທ່ານກຳລັງໃຊ້ຢູ່ບໍ?

ຜູ້ສູງອາຍຸໃນອອສເຕຣເລັຍມີສິດເຂົ້າໃຊ້ບໍລິການດູແລແລະອຸ້ມຊູຜູ້ສູງອາຍຸ. ມີຫຼາຍວິທີທີ່ທ່ານຈະໄດ້ຮັບການອຸ້ມຊູ. ທ່ານອາດສາມາດເຂົ້າໃຊ້:

- ບໍລິການດູແລຜູ້ສູງອາຍຸທີ່ໃຫ້ການຊ່ວຍເຫຼືອທ່ານຢູ່ບ້ານເພື່ອຊ່ວຍໃຫ້ທ່ານດຳລົງຊີວິດຢ່າງເປັນເອກະລາດ
- ການດູແລລະຍະສັ້ນເຊິ່ງຈະຊ່ວຍທ່ານໃຫ້ມີສຸຂະພາບດີຄືນຫຼັງຈາກໄດ້ຮັບບາດເຈັບຫຼືເຈັບປ່ວຍ
- ສະຖານທີ່ຢູ່ໃນບ້ານພັກດູແລຜູ້ສູງອາຍຸ ເມື່ອທ່ານບໍ່ສາມາດຢູ່ບ້ານດ້ວຍຕົນເອງໄດ້ອີກຕໍ່ໄປ.

### ເຮົາສາມາດຊ່ວຍທ່ານໄດ້ແນວໃດ?

ADA ອອສເຕຣເລັຍເຮັດການຮ້ອງຮຽນຕາງໜ້າເຊິ່ງຈະຊ່ວຍທ່ານ:

- ຮູ້ວ່າມີບໍລິການຫຍັງແດ່ທີ່ມີໄວ້ໃຫ້
- ເຂົ້າໃຊ້ບໍລິການອຸ້ມຊູແລະດູແລ
- ໃຊ້ປະໂຫຍດໃຫ້ໄດ້ຫຼາຍທີ່ສຸດຈາກບໍລິການດູແລຜູ້ສູງອາຍຸຂອງທ່ານ
- ເຂົ້າໃຈເລື່ອງລາຄາແລະຄ່າໃຊ້ຈ່າຍໃນການດູແລຜູ້ສູງອາຍຸ
- ແກ້ໄຂບັນຫາຫຼືຄຳຮ້ອງຮຽນກ່ຽວກັບບໍລິການດູແລຜູ້ສູງອາຍຸຂອງທ່ານ
- ເຂົ້າໃຈສິດທິຂອງທ່ານແລະໃຫ້ໝັ້ນໃຈວ່າທ່ານຖືກນັບຖືແລະໄດ້ຮັບຄວາມຍຸຕິທຳ
- ມີສິດມີສຽງໃນເລື່ອງການດູແລຂອງທ່ານແລະໃນສິ່ງທີ່ເປັນຜົນກະທົບຕໍ່ທ່ານ.

### ການຮ້ອງຮຽນຕາງໜ້າແມ່ນຫຍັງ?

ການຮ້ອງຮຽນຕາງໜ້າຊ່ວຍໃຫ້ທ່ານສາມາດແຈ້ງເຈດຈຳນົງແລະເວົ້າແທນທ່ານກ່ຽວກັບສິດທິແລະຄວາມຕ້ອງການຂອງທ່ານ. ຜູ້ຮ້ອງຮຽນຕາງໜ້າຂອງ ADA ອອສເຕຣເລັຍ ແມ່ນບຸກຄົນທີ່ມີຄວາມເປັນກາງ ທີ່ສາມາດຮັບຟັງກ່ຽວກັບສະຖານະຂອງທ່ານແລະຊ່ວຍທ່ານແກ້ໄຂບັນຫາຕ່າງໆ.

ຜູ້ຮ້ອງຮຽນຕາງໜ້າແມ່ນຢູ່ຂ້າງທ່ານ ແລະ ຈະເຮັດຕາມສິ່ງທີ່ທ່ານຕ້ອງການ. ສິ່ງສຳຄັນກໍຄື, ເຂົາເຈົ້າຈະຮັກສາຄວາມເປັນສ່ວນຕົວຂອງທ່ານ ແລະ ຈະບໍ່ເວົ້າຕໍ່ໃຫ້ຄົນອື່ນຟັງນອກເສັຍຈາກວ່າທ່ານຕ້ອງການຢາກໃຫ້ຄົນເຫຼົ່ານັ້ນຮູ້ນຳ.

### ບໍລິການຂອງພວກເຮົາແມ່ນ:

ບໍ່ເສັຍຄ່າ, ເກັບເປັນຄວາມລັບ, ເປັນເອກະລາດ

ທ່ານເປັນຜູ້ບອກວ່າທ່ານຕ້ອງການຫຍັງ

## ໂອ້ລົມກັບພວກເຮົາໄດ້ທີ່ເລກ 1800 700 600

Interpreter ຖ້າທ່ານຕ້ອງການນາຍພາສາ ກະລຸນາໂທເລກ 131 450

e: info@adaaustralia.com.au
w: www.adaaustralia.com.au

ADA ອອສເຕຣເລັຍຮັບຮູ້ເຈົ້າຖິ່ນເຈົ້າຖານຂອງແຜ່ນດິນນີ້ ແລະ ຂໍສະແດງຄວາມເຄົາລົບນັບຖືຕໍ່ ຜູ້ຊົງຄຸນວຸດທິ, ໃນອະດີດ, ໃນປັດຈຸບັນ ແລະ ກຳລັງກ້າວເຂົ້າມາ.